ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ປູກຕົ້ນໄມ້ປະດັບ ຢູ່ເດີນກິລາເປີດ-ປິດ ແຂວງຊຽງຂວາງ



ໃນຕອນເຊົ້າຂອງ ວັນທີ **01** ມິຖຸນາ **2020** ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ເຂົ້າຮ່ວມຂະບວນການປູກຕົ້ນໄມ້ປະດັບຢູ່ເດີນກິລາເປີດ-ປິດ (ຄັງໜອງຫຼວງ) ແຂວງຊຽງຂວາງ, ໃຫ້ກຽດເຂົ້າຮ່ວມນໍາພາຂະບວນການຂອງ ທ່ານ ວິສອນ ໄຊສິງຄາມ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ເພື່ອສະເຫຼີມສະຫຼອງວັນເດັກນ້ອຍສາກົນທີ່ໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ໃນປີ **2020** ແລະ ເພື່ອເປັນການກະກຽມໃສ່ງານມະຫາກໍາກິລາແຫ່ງຊາດ ຄັ້ງທີ **XI** ທີ່ແຂວງຊຽງຂວາງ ຈະເປັນເຈົ້າພາບ ແລະ ງານສະເຫຼີມສະຫຼອງພິທີຮັບທົ່ງໄຫຫີນເຂົ້າເປັນມໍລະດົກໂລກທີ່ຈະມາເຖິງນີ້.

ເຊິ່ງຂະບວນການອອກແຮງງານໃນຄັ້ງນີ້ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ຮ່ວມກັບບັນດາພະແນກການ, ອົງການຈັດຕັ້ງມະຫາຊົນ, ກອງບັນຊາການ ປກຊ-ປກສ ແຂວງ, ອົງການທຽບເທົ່າ, ລັດວິສາຫະກິດ, ທະນາຄານທຸລະກິດ ແລະ ຫ້ອງການ ອ້ອມຂ້າງແຂວງ ໄດ້ຮັບຜິດຊອບປູກຕົ້ນໄມ້ຕາມການແບ່ງເຂດຮັບຜິດຊອບຂອງໃຜລາວ. ທະນາຄານແຫ່ງ ສປປ ລາວ ສາຂາ

ພາກເໜືອ ແຂວງຊຽງຂວາງ ໄດ້ມີເຂດຮັບຜິດຊອບຢູ່ **11** ຕົ້ນ ເຊິ່ງການປູກແຕ່ລະຕົ້ນໄດ້ມີການໃສ່ຝຸ່ນ, ຫົດນ້ຳ ແລະ ເຮັດຮົ້ວສີຂາວອ້ອມ ໃຫ້ມີຄວາມຈົບງາມ ແລະ ຮັບປະກັນຈາກການທຳລາຍຂອງສັດລ້ຽງ; ແຕ່ລະພາກສ່ວນຮັບຜິດຊອບໃນການປູກຕົ້ນໄມ້ໃນຄັ້ງນີ້ ໄດ້ພ້ອມກັນເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ, ມີປະສິດທິພາບ, ມີຄວາມຮັບຜິດຊອບສູງ ແລະ ຢ່າງເປັນຂະບວນການຟົດຟື້ນ.







ຫຼັງຈາກນັ້ນ, ຄະນະຮັບຜິດຊອບຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ອົງການ ອພບຕ ແຂວງຊຽງຂວາງ ໄດ້ລົງປະສານສົມທົບກວດກາຄືນຕາມແຕ່ລະຈຸດທີ່ໄດ້ມີການປູກຕົ້ນໄມ້, ພ້ອມທັງແນະນຳວິທີການບົວລະບັດຮັກສາຕົ້ນໄມ້ເປັນຕາມແຕ່ລະຂັ້ນຕອນຢ່າງລະອຽດ.

✍ ຂ່າວ : ສຸກສະຫວັນ ພົມມະວົງ